ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງຈຳປາສັກ

ພະແນກສາທາລະນະສຸກແຂວງ

ເລກທີ: 214 /ສທຂ.ຈສ

ແຂວງຈຳປາສັກ, ວັນທີ: 1 ເມສາ 2026

# ໜັງສືເຊີນເຂົ້າຮ່ວມການປະມູນ

1. ພະແນກສາທາລະນະສຸກແຂວງ ໄດ້ຮັບທຶນລັດຖະບານ ພາກ 67 ຈາກກະຊວງສາທາລະນະສຸກ,ເພື່ອໃຊ້ຈ່າຍເຂົ້າໃນການດຳເນີນ ການກໍ່ສ້າງ ສຸກສາລາບ້ານວັງເວີນທັລງໃໝ່ ທີ່ເມືອງຊະນະສົມບູນ ແຂວງຈຳປາສັກ ຈາກດ້ວຍການດຳເນີນການປະມູນເປີດກ້ວງພາຍໃນ.
2. ພະແນກສາທາລະນະສຸກແຂວງຈຳປາສັກ, ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີເງື່ອນໄຂເໝາະສົມເຂົ້າຍື່ນຊອງປະມູນສຳລັບກໍ່ສ້າງສຸກສາລາບ້ານວັງເວີນທັລງໃໝ່ ທີ່ເມືອງຊະນະສົມບູນ ແຂວງຈຳປາສັກ ເຊິ່ງມີໄລຍະການກໍ່ສ້າງແມ່ນ ( 03 ປີ 36 ເດືອນ )
3. ການປະມູນ ຈະດຳເນີນຕາມຂັ້ນຕອນການປະມູນເປີດກ້ວາງພາຍໃນທີ່ໄດ້ກຳນົດໄວ້ໃນດຳລັດຂອງນາຍົກລັດຖະມົນຕີວ່າດ້ວຍການປະມູນຈັດຊື້ສິນຄ້າ, ການກໍ່ສ້າງ, ການສ້ອມແປງ ແລະ ການບໍລິການດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ລະບຽບການຈັດຕັ້ງປະຕິບັດລຳດັດ, ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
4. ການປະມູນນີ້ແມ່ນອະນຸຍາດໃຫ້ທຸກໆບໍລິສັດທີ່ມີເງືອນໄຂຄຸນວຸດທິທີ່ເໝາະສົມທີ່ມີທະບຽນວິສະຫະກິດທາງດ້ານການກໍ່ສ້າງ-ສ້ອມແປງເຄຫາສະຖານ ຢູ່ໃນຂອບເຂດທົ່ວປະເທດ.
5. ບໍລິສັດມີເງືອນໄຂຄຸນວຸດທິທີ່ເໝາະສົມມີຄວາມສົນໃຈສາມາດຕິດຕໍ່ພົວພັນໄດ້ທີ່ພະແນກສາທາລະນະສຸກແຂວງຈຳປາສັກ,ບ້ານໂຊກອຳນວຍ,ຖະໜົນ ເລກທີ 13 ໃຕ້,ໂທ-ແຟັກ ( 856-31)212017 020 5563 9023
6. ບໍລິສັດທີ່ສົນໃຈຢາກຊື້ເອກະສານປະມູນຄົບຊຸດຕ້ອງໄດ້ປະກອບໃບສະເໜີຫາພະແນກສາທາລະນະສຸກແຂວງຈຳປາສັກເລີ່ມແຕ່ວັນທີ 1 ເມສາ 2026 ເຖິງວັນທີ 04 ພຶດສະພາ 2026 ໃນໂມງລັດຖະການ 8:00 ໂມງ ຫາ 12:00 ໂມງ ແລະ 13:00 ໂມງ ຫາ 16:00 ໂມງ ໃນລາຄາ ( 1.500.000ກີບ ) ໂດຍບໍ່ມີການສົ່ງຄືນ,ວິທີການຈ່າຍ ຕ້ອງຈ່າຍເປັນເງິນສົດ ຫລື ເຊັກເງິນສົດ
7. ຊອງປະມູນຕ້ອງສົ່ງທີ່ຫ້ອງການຂອງຂະແໜງບໍລິຫານ, ແຜນການ ແລະ ການເງິນ ພະແນກສາທາລະນະສຸກແຂວງກ່ອນເວລາ 09: 00 ໂມງ ຂອງວັນທີ 04ພຶດສະພາ2026 ຊອງປະມູນໃດທີ່ໄດ້ຮັບຊ້າຈະໄດ້ຖືກປະຕິເສດ ແລະ ສົ່ງຄືນໃຫ້ຜູ້ເຂົ້າແຂ່ງຂັນປະມູນ ໂດຍບໍ່ມີການເປີດຊອງ,ຊອງປະມູນທຸກໆຊອງຈະໄດ້ເປີດໃນເວລາ09: 00 ໂມງ ຂອງວັນທີ 04 ພຶດສະພາ 2026 ໂດຍຊ້ອງໜ້າຄະນະກຳມະ ການປະມູນ ແລະ ຕົວແທນຂອງຜູ້ເຂົ້າແຂ່ງຂັນປະມູນ ທີ່ສົນໃຈຢາກເຂົ້າຮ່ວມ.
8. ຊອງປະມູນທຸກໆຊອງຕ້ອງໄດ້ປະກອບໜັງສືຄໍ້າປະກັນການປະມູນມາພ້ອມ.
9. ຊອງປະມູນຕ້ອງສົ່ງທີ່ຫ້ອງການຂອງຂະແໜງບໍລິຫານ, ແຜນການ ແລະ ການເງິນ ພະແນກສາທາລະນະສຸກແຂວງກ່ອນເວລາ 8:30 ໂມງເຊົ້າ ຂອງວັນທີ 04 ພຶດສະພາ 2026

ຮັກສາການ ຫົວໜ້າພະແນກ

ກະຊວງສາທາລະນະສຸກ
ພະແນກ
ສາທາລະນະສຸກ
ແຂວງຈຳປາສັກ

ດຣ. ນ. ສັງວານ ແສນສຸກ
Mrs. Sangvan SENESOUK